**ມິຊຊາອາທິດທີ 32 ກຳມະດາປີ A**
**ວັນທີ 8 ພະຈິກ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 25, 1-13**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ເວົ້າເລື່ອງການສະເດັດກັບມາຂອງພຣະອົງໃຫ້ພວກສາວົກຟັງວ່າ: "ອານາຈັກສະຫວັນຍັງປຽບໄດ້ກັບນາງສາວສິບຄົນທີ່ຖືຕະກຽງອອກໄປຕ້ອນຮັບເຈົ້າບ່າວ. ໃນຈຳນວນນາງສາວສິບຄົນນັ້ນ ຫ້າຄົນເປັນຄົນໂງ່ແລະຫ້າຄົນເປັນຄົນສະຫລາດ. ພວກທີ່ໂງ່ຖືເອົາຕະກຽງຂອງຕົນໄປແຕ່ບໍ່ໄດ້ເອົານ້ຳມັນໄປເພື່ອໄວ້. ສ່ວນພວກສະຫລາດຫ້າຄົນຖືເອົາຕະກຽງຂອງຕົນແລະຍັງໄດ້ເອົານ້ຳມັນໃສ່ຂວດໄປດ້ວຍ. ແຕ່ຍ້ອນວ່າເຈົ້າບ່າວນານມາເຂົາທັງໝົດກໍເຫງົານອນ, ແລ້ວເລີຍພາກັນຫລັບໄປ. ພໍທ່ຽງຄືນກໍມີສຽງຮ້ອງວ່າ: "ນີ້ເດ໋ ເຈົ້າບ່າວມາແລ້ວ, ຈົ່ງອອກໄປຕ້ອນຮັບເພິ່ນເຖີດ." ເວລານັ້ນ ນາງສາວທັງໝົດພ້ອມກັນຕື່ນນອນ ແລະຈັດແຈງໃຕ້ຕະກຽງຂອງໃຜລາວ. ພວກນາງສາວໂງ່ຈຶ່ງເວົ້າກັບພວກສະຫລາດວ່າ: "ຂໍແບ່ງນ້ຳມັນໃຫ້ພວກເຮົາແດ່. ຍ້ອນວ່າຕະກຽງຂອງພວກເຮົາກຳລັງຈະມອດ". ພວກນາງສະຫລາດຈຶ່ງຕອບວ່າ: "ຢ້ານບໍ່ມີພໍສຳລັບພວກເຮົາແລະພວກເຈົ້າດອກ. ໃຫ້ພວກເຈົ້າໄປຊື້ເອົານຳພວກພໍ່ຄ້າຈະດີກວ່າ". ເວລາພວກນາງສາວໂງ່ໄປຊື້ນ້ຳມັນ, ເຈົ້າບ່າວກໍມາຮອດ. ພວກນາງທີ່ຕຽມພ້ອມແລ້ວກໍໄດ້ເຂົ້າໃນຫ້ອງງານວິວາຫະມຸງຄຸນນຳເຈົ້າບ່າວ ແລ້ວກໍອັດປະຕູໄວ້. ສຸດທ້າຍພວກນາງອື່ນໆກໍມາຮອດດ້ວຍ ແລະຮ້ອງວ່າ: "ພຣະອົງເຈົ້າເອີຍ ! ພຣະອົງເຈົ້າເອີຍໄຂເອົາພວກຂ້ານ້ອຍແດ່." ເຈົ້າບ່າວຈຶ່ງຕອບວ່າ: "ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ເຮົາບໍ່ຮູ້ຈັກພວກເຈົ້າດອກ". ດັ່ງນີ້, ພວກເຈົ້າຈົ່ງຕື່ນເຝົ້າເຖີດ. ຍ້ອນວ່າພວກເຈົ້າບໍ່ຮູ້ຈັກວັນແລະເວລາເລີຍ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 25, 1-13**

ບົດອ່ານທັງສາມບົດໃນວັນອາທິດນີ້ຢາກອະທິບາຍໃຫ້ພວກເຮົາເຂົ້າໃຈເຖິງການສະເດັດກັບມາອີກຄັ້ງໜຶ່ງຂອງອົງພຣະເຢຊູກຣິສໂຕເຈົ້າ.

ໃນບົດອ່ານທີໜຶ່ງຈາກໜັງສືຄວາມສະຫລາດ, ຜູ້ຂຽນໜັງສືຄວາມສະຫລາດນີ້ຢາກບອກໃຫ້ພວກເຮົາຮູ້ວ່າຄວາມສະຫລາດນີ້ແມ່ນພຣະເຈົ້າ. ກ່ອນທີ່ພວກເຮົາຊອກຫາພຣະອົງ, ພຣະອົງກໍໄດ້ຊອກຫາພວກເຮົາກ່ອນແລະໄດ້ປະຈັກມາໃຫ້ພວກເຮົາເຫັນເພື່ອຕ້ອນຮັບພວກເຮົາເຂົ້າຢູ່ກັບພຣະອົງ.

ສ່ວນບົດອ່ານທີສອງຈາກຈົດໝາຍຂອງນັກບຸນເປົາໂລຫາຊາວເມືອງເທຊາໂລນິກ, ນັກບຸນເປົາໂລໄດ້ຕັກເຕືອນຊາວເທຊາໂລນິກໃຫ້ມີຄວາມໄວ້ໃຈແລະຄວາມເຊື່ອໃນພຣະເຢຊູເຈົ້າຜູ້ໄດ້ຕາຍແລະໄດ້ກັບເປັນຄືນມາ. ເພາະໃນວັນສຸດທ້າຍ, ເມື່ອເວລາພຣະອົງຈະກັບມາອີກຄັ້ງໜຶ່ງ, ທຸກຄົນທີ່ເຊື່ອໃນພຣະອົງກໍຈະໄດ້ກັບເປັນຄືນມາເໝືອນກັບພຣະອົງ.

ໃນພຣະວໍລະສານ, ພຣະເຢຊູເຈົ້າກໍກ່າວການສະເດັດກັບມາອີກຄັ້ງໜຶ່ງຂອງພຣະອົງໃຫ້ພວກສາວົກຟັງໂດຍໃຊ້ຄວາມປຽບທຽບເລື່ອງຍິງສາວສິບຄົນທີ່ຖືຕະກຽງອອກໄປຕ້ອນຮັບເຈົ້າບ່າວ. ໃນຈຳນວນສິບຄົນນີ້ມີຫ້າຄົນເປັນຄົນສະຫລາດ ແລະອີກຫ້າຄົນເປັນຄົນໂງ່. ສິ່ງທີ່ຄ້າຍຄືກັນຄືທັງສິບຄົນນີ້ລ້ວນແຕ່ລໍຖ້າເຈົ້າບ່າວ, ພວກເຂົາລ້ວນແຕ່ມີຕະກຽງຄົນລະອັນ ແລະພວກເຂົາລ້ວນແຕ່ນອນຫລັບໃນເວລາລໍຖ້າ. ສິ່ງທີ່ແຕກຕ່າງກັນລະຫວ່າງຍິງສາວສິບຄົນນີ້ກໍຄື ຍິງສາວສະຫລາດໄດ້ຖືນໍ້າມັນຕະກຽງໄປນຳ. ສ່ວນຍິງສາວໂງ່ບໍ່ໄດ້ກະກຽມນໍ້າມັນໄວ້. ຄຳຖາມທີ່ຕາມມາກໍຄື ຕະກຽງມີຄວາມໝາຍແນວໃດ? ແລະນໍ້າມັນມີຄວາມໝາຍແນວໃດ? ຕະກຽງໃນທີ່ນີ້ແມ່ນຊີວິດທີ່ພຣະເຈົ້າປະທານໃຫ້ພວກເຮົາແຕ່ລະຄົນ. ສ່ວນນໍ້າມັນແມ່ນຄຸນງາມຄວາມດີຊຶ່ງພວກເຮົາໄດ້ກະທຳແລະສະສົມໄວ້ເມື່ອເວລາມີຊີວິດຢູ່. ເມື່ອວັນທີ່ພຣະເຢຊູເຈົ້າ, ຜູ້ເປັນເຈົ້າບ່າວຈະກັບມານັ້ນ, ພຣະອົງຈະຕ້ອນຮັບເອົາຜູ້ທີ່ມີນໍ້າມັນເພື່ອໃຕ້ຕະກຽງໃຫ້ຮຸ່ງແຈ້ງເຂົ້າຮ່ວມງານວິວາຫະມຸງຄຸນຮ່ວມກັບພຣະອົງ ອັນແມ່ນອານາຈັກສະຫວັນນັ້ນເອງ. ສ່ວນຜູ້ທີ່ບໍ່ມີນໍ້າມັນເພື່ອໃຫ້ຕະກຽງຮຸ່ງແຈ້ງນັ້ນໝາຍເຖິງຜູ້ທີ່ບໍ່ໄດ້ສ້າງຄຸນງາມຄວາມດີໄວ້. ເຂົາເຫລົ່ານັ້ນຈະບໍ່ໄດ້ເຂົ້າຮ່ວມໃນອານາຈັກສະຫວັນຮ່ວມສຸກກັບພຣະເຈົ້າເລີຍ.

**ພາວະນາ**

ໂອພຣະເຈົ້າ, ລູກຂໍຂອບພຣະຄຸນພຣະອົງສຳລັບແສງສະວ່າງແຫ່ງວາຈາຊີວິດຂອງພຣະອົງໄດ້ບອກສອນລູກໃນວັນອາທິດນີ້. ເພື່ອລູກຈະໄດ້ຕື່ນຕົວແລະຜັນປ່ຽນຊີວິດການກະທຳທີ່ບໍ່ດີຂອງລູກແລ້ວຫັນມາຫາເສັ້ນທາງອັນຊື່ກົງ. ເພື່ອວັນທີ່ພຣະອົງຈະກັບມາອີກຄັ້ງນັ້ນລູກຈະໄດ້ພ້ອມອອກໄປຕ້ອນຮັບພຣະອົງແລະເຂົ້າຮ່ວມສຸກກັບພຣະອົງໃນອານາຈັກສະຫວັນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ